ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ກະຊວງສຶກສາທິການ

ເລກທີ 745...../ສສ.ຈຕ/08.

ນະຄອນຫຼວງວຽງຈັນ, ວັນທີ 22 APR 2008

ຂໍ້ຕົກລົງຂອງລັດຖະມົນຕີ

ວ່າດ້ວຍການຍົກຍ້າຍ ແລະແຕ່ງຕັ້ງພະນັກງານດຳລົງຕຳແໜ່ງຜູ້ອຳນວຍການສູນຮັບປະກັນຄຸນນະພາບ.

ເຫັນຕາມ: ກົດໝາຍວ່າດ້ວຍລັດຖະບານແຫ່ງ ສ.ປ.ປ ລາວ ສະບັບເລກທີ 02 /ສພຊ, ລົງວັນທີ 6 / 5 / 2003.

ເຫັນຕາມ: ດຳລັດຂອງນາຍົກລັດຖະມົນຕີສະບັບເລກທີ 62/ນຍ, ລົງວັນທີ 7 / 4 / 2008 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງສຶກສາທິການ.

ເຫັນຕາມ: ການຄົ້ນຄ້ວາເຫັນດີເປັນເອກະພາບຂອງກອງປະຊຸມຄະນະຮັບຜິດຊອບປັບປຸງກົງຈັກການຈັດຕັ້ງຂອງກະຊວງສຶກສາທິການ ຄັ້ງວັນ ທີ 1 / 4 / 2008.

ເຫັນຕາມ: ການຄົ້ນຄ້ວາເຫັນດີເປັນເອກະພາບຂອງກອງປະຊຸມຄົບຄະນະພັກ ແລະຄົບຄະນະລັດຖະມົນຕີກະຊວງສຶກສາທິການ ຄັ້ງວັນທີ 17 / 4 / 2008 ແລະກອງປະຊຸມຄະນະປະຈຳຄະນະພັກ ແລະຄະນະລັດຖະມົນຕີ ຄັ້ງວັນທີ 18 / 4 / 2008.

ເຫັນຕາມ: ການສະເໜີຂອງກົມຈັດຕັ້ງ ແລະພະນັກງານ.

ລັດຖະມົນຕີວ່າການກະຊວງສຶກສາທິການ ຕົກລົງ:

ມາດຕາ1: ຍົກຍ້າຍ ທ່ານ ວັນໄຊ ນໍລະແສງ, ຮອງຫົວໜ້າກົມການສຶກສານອກໂຮງຮຽນ ໄປເປັນຜູ້ອຳນວຍການສູນຮັບປະກັນຄຸນນະພາບ.

ມາດຕາ2: ພະນັກງານທີ່ຖືກແຕ່ງຕັ້ງໃນມາດຕາ1 ຂ້າງເທິງມີສິດໄດ້ຮັບເງິນຕຳແໜ່ງບໍລິຫານປະເພດ 6 ຕາມດຳລັດຂອງນາຍົກລັດຖະມົນຕີສະບັບເລກທີ 173/ນຍ, ລົງວັນທີ 11 / 11 / 1993.

ມາດຕາ3: ເງິນເດືອນ ແລະເງິນນະໂຍບາຍຕ່າງໆ ມອບໃຫ້ການເງິນຂັ້ນສອງຫ້ອງການກະຊວງ ເປັນຜູ້ຄິດໄລ່ ແລະເບີກຈ່າຍໃຫ້ຜູ້ກ່ຽວຕາມລະບຽບຫຼັກການ.

ມາດຕາ4: ໃຫ້ຫ້ອງການກະຊວງ, ກົມຈັດຕັ້ງ-ພະນັກງານ, ກົມການເງິນ ແລະທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະປະຕິບັດຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງໃຜລາວ.

ມາດຕາ5: ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນໄປ ແລະທຸກຂໍ້ຕົກລົງໃນເມື່ອກ່ອນທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກລົບລ້າງ.

ລັດຖະມົນຕີວ່າການກະຊວງສຶກສາທິການ.

ກະຊວງສຶກສາທິການ ລັດຖະມົນຕີ

ສຈ,ດຣ ສົມກົດ ມັງໜໍ່ເມກ

+ ບ່ອນສົ່ງ:

- ຄະນະຈັດຕັ້ງສູນກາງພັກ 1 ສະບັບ.
- ກະຊວງການເງິນ 1 ສະບັບ.
- ທະບວງການປົກຄອງແລະຄຸ້ມຄອງລັດຖະກອນ 1 ສະບັບ.
- ຫ້ອງການກະຊວງ, ກົມຕ່າງໆ ພາກສ່ວນລະ 1 ສະບັບ.
- ຜູ້ກ່ຽວ 1 ສະບັບ.
- ເກັບມ້ຽນ 1 ສະບັບ.